ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 1149 /ທຄຕລ.2025
ນະຄອນຫຼວງວຽງຈັນ, ວັນທີ: 17/4/2025

# ແຈ້ງການ

**ເຖິງ:** ບຸກຄົນ, ນິຕິບຸກຄົນ ແລະ ພາກສ່ວນຕ່າງໆ.

**ເລື່ອງ:** ເຊີນເຂົ້າຮ່ວມການປະມູນພາຫະນະເກົ່າ ຢູ່ທີ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ສຳນັກງານໃຫຍ່).

- ອີງຕາມໜັງສືແຈ້ງການຈາກ ກົມປະຕິຮູບລັດວິສະຫະກິດ ແລະ ການປະກັນໄພ ກະຊວງການເງິນ ສະບັບເລກທີ 1068-02/ປລປ, ລົງວັນທີ 08 ກັນຍາ 2023;
- ອີງຕາມບົດບັນທຶກກອດກາປະເມີນລາຄາພາຫະນະຂອງ ທຄຕລ ຈາກກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ກະຊວງການເງິນ ຄັ້ງວັນທີ 16 ມັງກອນ 2025.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດແຈ້ງມາຍັງ ບຸກຄົນ, ນິຕິບຸກຄົນ, ແລະ ພາກສ່ວນຕ່າງໆ ຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນ, ພາຫະນະເກົ່າໝົດຫຼູ້ຍຫ້ຽນ ຂອງ ທຄຕລ ຈຳນວນທັງໝົດ **15** ຄັນ ( ລົດໃຫຍ່ ຈຳນວນ **09** ຄັນ ແລະ ລົດຈັກ ຈຳນວນ **06** ຄັນ ).

❖ ທ່ານຜູ້ທີ່ສົນໃຈສາມາດເຂົ້າມາເບິ່ງລົດຕົວຈິງໄດ້ທີ່ ສາງຂອງ ທຄຕລ ທີ່ຕັ້ງຢູ່ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ (ສາງໂພນທັນ) ຈະຕ້ອງໄດ້ຈອດລົດໄວ້ທາງນອກສາງ ແລະ ແຈ້ງເອກະສານຢັ້ງຢືນຕົວຕົນ ( ບັດປະຈຳຕົວ, ສຳມະໂນຄົວ, ໜັງສືຜ່ານແດນ ) ແຈ້ງຕໍ່ພະນັກງານຮັກສາຄວາມປອດໄພ ພ້ອມລົງທະບຽນກ່ອນເຂົ້າເບິ່ງລົດໃນວັນລັດຖະການ ວັນທີ 17-25/04/2025 ຕາມເວລາດັ່ງນີ້:

- ວັນຈັນ-ວັນສຸກ ພາກເຊົ້າ: 08:30 ໂມງ - 11:30 ໂມງ.
- ວັນຈັນ-ວັນສຸກ ພາກບ່າຍ: 13:30 ໂມງ - 15:30 ໂມງ.

❖ ການຊື້ ແລະ ການຍື່ນຊອງປະມູນ:

- ສະຖານທີ່ພະແນກຫ້ອງການບໍລິຫານ ແລະ ການເງິນ (ຊັ້ນ 4) ຕຶກ C ທຄຕລ ສຳນັກງານໃຫຍ່:
- ການຊື້ຊອງປະມູນໃນວັນລັດຖະການ ນັບແຕ່ວັນທີ 17-25/04/2025 ເວລາ 8:30-15:00 ໂມງ.
- ກຳນົດຍື່ນຊອງປະມູນກ່ອນເວລາ 09:00 ໂມງ ຂອງວັນອັງຄານ, ວັນທີ 29/04/2025 ແລະ ຈະທຳການເປີດຊອງປະມູນ ເວລາ 09:00 ໂມງ ຂອງວັນດຽວກັນ ທີ່ຫ້ອງປະຊຸມຕຶກ A ຊັ້ນ 3 ຂອງ ທຄຕລ ສາຂານະຄອນຫຼວງວຽງຈັນ ( ຕະຫຼາດທົ່ງຂັນຄຳ ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ທີ່ມີຄວາມສົນໃຈຢາກເຂົ້າຮ່ວມປະມູນຊາບ.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນຫຼວງວຽງຈັນ

**ນ. ສາຍສະໝອນ ຈັນທະຈັກ**

1. ຕິດຕໍ່ພົວພັນຂໍ້ມູນ ແລະ ເບິ່ງພາຫະນະຕົວຈິງ:
   ທ່ານ ວຽງທະສອນ ໂທ: 020 2318 1118
2. ພົວພັນຊື້ຊອງປະມູນ:
   ທ່ານ ນ ຈັນອາລີ ໂທ:020 5498 2615
   ທ້າວ ອໍລະຈິດ ໂທ: 020 2245 8476 / 020 9371 5772

# ຕາຕະລາງລາຍການລົດທີ່ຈະປະມູນ

| ລ/ດ | ປະເພດ ລົດ | ຍີ່ຫໍ້ | ທະບຽນ | ສີ | ເລກຈັກ | ເລກຖັງ | ປີນຳໃຊ້ | ມູນຄ່າຊື້ (ກີບ) | ລາຄາກາງ (ກີບ) |
|---|---|---|---|---|---|---|---|---|---|
| 1 | ລົດກະບະ | TOYOTA HILUX | ກກ 2935 | ປອນເງິນ | 2KDU130188 | MROFR22G00 0621410 | 10/09/2012 | 312,485,500.00 | 95,000,000.00 |
| 2 | ລົດກະບະ | TOYOTA HILUX | ກຮ 5588 | ປອນເງິນ | 2KDŒ58360 27 | MROFR22G70 0619167 | 8/08/2012 | 308,962,500.00 | 95,000,000.00 |
| 3 | ລົດກະບະ | TOYOTA HILUX | ກຈ 7129 | ປອນເງິນ | 2KDD287451 | MROFR22G2D D760857 | 6/05/2013 | 292,878,000.00 | 90,000,000.00 |
| 4 | ລົດກະບະ | TOYOTA HILUX | ກຈ 2926 | ປອນເງິນ | 2KDU125953 | MROFR22GX0 0621060 | 12/01/2012 | 308,962,500.00 | 95,000,000.00 |
| 5 | ລົດກະບະ | TOYOTA HILUX | ກຈ 2962 | ປອນເງິນ | 2KD5849284 | MROFR22G40 0620048 | 9/07/2012 | 308,962,500.00 | 95,000,000.00 |
| 6 | ລົດຕູ້ | TOYOTA HIACE | ກຈ 1387 | ປອນເງິນ | 2KD5727259 | JTFSS22P1001 08854 | 12/01/2012 | 304,950,000.00 | 85,000,000.00 |
| 7 | ລົດຕູ້ | TOYOTA HIACE | ກຈ 1396 | ປອນເງິນ | 2KD5705132 | JTFSS22PX001 07783 | 7/04/2012 | 304,950,000.00 | 85,000,000.00 |
| 8 | ລົດຕູ້ | TOYOTA HIACE | ກຄ 3150 | ປອນເງິນ | 2KD5240098 | JTFSS22P5000 38764 | 20/12/2010 | 281,400,000.00 | 83,000,000.00 |
| 9 | ລົດຕູ້ | TOYOTA HIACE | ກຄ 6210 | ປອນເງິນ | 2KDA084234 | JTFJSO2P4000 33910 | 7/02/2013 | 280,836,000.00 | 80,000,000.00 |
| 10 | ລົດຈັກ | HONDA ວິບາກ | ຈກ 3969 | ແດງ | L1255E5596 221 | L12555742124 | 15/12/2008 | 30,968,090.00 | 5,000,000.00 |
| 11 | ລົດຈັກ | HONDA WAVE 100 | ຈກ 5004 | ແດງ-ດຳ | NF100E8140 285 | NF1008140285 | 22/08/2007 | 11,172,000.00 | 3,000,000.00 |
| 12 | ລົດຈັກ | HONDA WAVE 100 | ຈກ 3503 | ປອນດຳ | NF100E8128 037 | NF1008128037 | 3/06/2008 | 10,973,000.00 | 3,000,000.00 |
| 13 | ລົດຈັກ | HONDA WAVE 100 | ຈກ 6413 | ແດງ-ດຳ | NF100E8149 746 | NF100E814974 6 | 18/03/2009 | 11,280,000.00 | 3,000,000.00 |
| 14 | ລົດຈັກ | HONDA WAVE 100 | ຈຂ 4474 | ດຳ | NF100E8162 170 | NF1008162170 | 27/04/2010 | 11,457,000.00 | 3,000,000.00 |
| 15 | ລົດຈັກ | HONDA WAVE 100 | ຈຄ 6837 | ແດງ-ດຳ | NF100ŒE 8201032 | NF1008201032 | 19/03/2012 | 11,633,000.00 | 3,000,000.00 |

**ຄະນະກຳມະການປະມູນຊັບສິນບັດ**

ນ. ພູແສງທອງ ອານຸລັກຄຳ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຄະນະກຳມະການປະມູນຊັບສິນບັດ

ນະຄອນຫຼວງວຽງຈັນ, ວັນທີ 17 / 04 /2025

# ລະບຽບປະມູນຂາຍພາຫະນະເກົ່າ

1. ພາຫະນະທີ່ປະມູນແມ່ນຕາມສະພາບທີ່ເປັນຢູ່, ທຄຕລ ຈະບໍ່ຮັບປະກັນຄຸນນະພາບ ຫຼື ສ້ອມແປງໃດໆໃຫ້.
2. ເອກະສານປະມູນແມ່ນເປັນຂອງຄະນະກຳມະການອອກໃຫ້ (ຊອງປະມູນ).
3. ຄະນະກຳມະການໄດ້ຕົກລົງເຫັນດີຂາຍຊອງປະມູນລົດໃຫຍ່ໃນລາຄາ **500.000** ກີບ/ຊອງ ແລະ ຕໍ່ຄັນ ໂດຍຊຳລະ**ເຂົ້າບັນຊີເງິນກີບເລກທີ: 0101100084768 ອອກຊື່: SELLING-BUYING BCEL ASSETS.**
4. ຄະນະກຳມະການໄດ້ຕົກລົງເຫັນດີຂາຍຊອງປະມູນລົດຈັກໃນລາຄາ **200.000** ກີບ/ຊອງ ແລະ ຕໍ່ຄັນໂດຍຊຳລະ **ເຂົ້າບັນຊີເງິນກີບເລກທີ: 0101100084768 ອອກຊື່: SELLING-BUYING BCEL ASSETS.**
5. ຜູ້ທີ່ໃສ່ມູນຄ່າປະມູນສູງສຸດຖືວ່າເປັນຜູ້ຊະນະການປະມູນ ແລະ ຕ້ອງໄດ້ມາຊຳລະຄ່າລົດພາຍໃນກຳນົດ **07** ວັນລັດຖະການ ຈຶ່ງຈະສາມາດເອົາພາຫະນະອອກໄດ້.
6. ໃນກໍລະນີມີຜູ້ປະມູນໃສ່ຊອງເທົ່າກັນຕ້ອງໄດ້ປະມູນໃໝ່ກັບທີ່ໂດຍຖືເອົາມູນຄ່າເທົ່າກັນເປັນໂຕຖານ.
7. ຜູ້ຊະນະການປະມູນ ຕ້ອງວາງເງິນຄ້ຳປະກັນການປະມູນຢ່າງໜ້ອຍ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 30/06/2025) ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
8. ຜູ້ຊະນະການປະມູນ ຫາກຕ້ອງການຈະສະລະສິດ ຈະຖືກຍຶດເງິນມັດຈຳ **10%** ຂອງມູນຄ່າທີ່ໄດ້ປະມູນ, ພ້ອມນີ້ຄະນະກຳມະການຈະປະມູນໃໝ່ໂດຍຖືເອົາລາຄາຜູ້ຊະນະນັ້ນມາຕັ້ງ.
9. ຜູ້ທີ່ມາຍື່ນຊອງປະມູນຈະຕ້ອງໄດ້ມາລໍຖ້າຟັງຜົນປະມູນດ້ວຍຕົນເອງ.
10. ລາຍຈ່າຍໃນການຂຶ້ນທະບຽນ ແລະ ຄ່າໃຊ້ຈ່າຍຕ່າງໆ ແມ່ນຕົກເປັນພາລະຂອງຜູ້ປະມູນໄດ້.
11. ພາຍຫຼັງໄດ້ເຮັດໃບຊື້ຂາຍແລ້ວຜູ້ທີ່ປະມູນໄດ້ ຕ້ອງແລ່ນເອກະສານເພື່ອປ່ຽນປ້າຍພາຍໃນ 45 ວັນ.

ດັ່ງນັ້ນ, ຈຶ່ງແຈ້ງລະບຽບສະບັບນີ້ມາຍັງບັນດາທ່ານ ທີ່ມີຄວາມສົນໃຈຢາກເຂົ້າຮ່ວມປະມູນຊາບ.

**ຄະນະກຳມະການປະມູນຊັບສິນບັດ**

**ນ. ພູແສງທອງ ອານຸລັກຄຳ**